ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ສຳນັກງານ ຄຄຊ
ເລກທີ 1023
ວັນທີ 11.11.14
ໂທລະສັບ 021 217770

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 42/ຫກ

ນະຄອນຫຼວງວຽງຈັນ, ວັນທີ: 11 NOV 2014

# ລາຍງານການເຄື່ອນໄຫວປະຈຳອາທິດ
# 27-31/10/2014 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
# ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽງໜຸ້ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາດີ ເປັນຕົ້ນແມ່ນຕົວເລກການຂາຍບ້ານມືສອງຂອງສະຫະລັດ ເພີ່ມຂຶ້ນຈາກ -1,8% ໃນເດືອນ 8/2014 ເປັນ 2,4% ໃນເດືອນ 9/2014 ແລະ ຜົນການດຳເນີນທຸລະກິດຂອງຫຼາຍບໍລິສັດເອກະຊົນເພີ່ມຂຶ້ນ. ສ່ວນເງິນຢວນແຂງຄ່າຂຶ້ນເມື່ອທຽບໃສ່ເງິນໂດລາສະຫະລັດ ສາເຫດຍ້ອນຕົວເລກການຂະຫຍາຍຕົວທາງດ້ານເສດຖະກິດຂອງ ສປ.ຈີນ ໃນໄຕມາດ 3/2014 ຂະຫຍາຍຕົວໃນລະດັບ 7,3% ຊຶ່ງສູງກວ່ານັກວິເຄາະຈາກບູມເບີກ ແລະ ລອຍເຕີ້ ຄາດຄະເນໄວ້ຈະຂະຫຍາຍຕົວ 7,2%.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 15-21/10/2014 | ອາທິດນີ້ 22-28/10/2014 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ ໂດລາ | 1,2805 | 1,2703 | 0,80% |
| ໂດລາ/ເຢນ | 106,63 | 107,88 | -1,16% |
| ໂດລາ/ບາດ | 32,24 | 32,42 | -0,54% |
| ໂດລາ/ເປໂຊ | 44,78 | 44,78 | 0,00% |
| ໂດລາ/ຣູເປັຍ | 1.1996,11 | 12156,22 | -1,32% |
| ໂດລາ/ໂດລາສິງກະໂປ | 1,2698 | 1,2739 | -0,33% |
| ໂດລາ/ຢວນ | 6,1213 | 6,1138 | 0,12% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 2,71% ຈາກ 82,98 ໂດລາ/ບາເຣວ ມາເປັນ 80,72 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງໂລກຫຼຸດລົງ ເຫັນໄດ້ຈາກຄັງສຳຮອງນ້ຳມັນປະຈຳອາທິດທີ 17 ຕຸລາ 2014 ຂອງ ສ.ອາ ເມລິກາ ເພີ່ມຂຶ້ນ 7,1 ລ້ານບາເຣວ ບວກກັບນັກລົງທຶນເຊື່ອໝັ້ນຕໍ່ການສະໜອງນ້ຳມັນຈາກອີຣັກ ແລະ ອີຣ່ານທີ່ສາມາດກັບມາຜະລິດນ້ຳມັນຫຼາຍຂຶ້ນ.

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 1,58% ຈາກ 1.248,16 ໂດລາ/ອອນ ມາເປັນ 1.228,37 ໂດລາ/ອອນ ຍ້ອນນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳເພີ່ມຂຶ້ນ ເພື່ອເກັງກຳໄລ ບວກກັບການແຂງຄ່າຂອງເງິນໂດລາໃນຕະຫຼາດສາກົນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,07% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,09% ສຳລັບອັດຕາຕະຫຼາດ. ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,16% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,44% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 14-21/10/2014 | | | ອາທິດນີ້ 22-28/10/2014 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະນາຄານ[1] | | | | | | | | | |
| ໂດລາ | 8.028,56 | 8.059,88 | 8.045,67 | 8.026,42 | 8.058,88 | 8.040,11 | 0,03% | 0,01% | 0,07% |
| ບາດ | 249,66 | 250,87 | 250,29 | 249,00 | 250,22 | 249,89 | 0,26% | 0,26% | 0,16% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.036,53 | 8.072,50 | 8.054,52 | 8.030,53 | 8.064,77 | 8.047,65 | 0,07% | 0,10% | 0,09% |
| ບາດ | 249,24 | 251,12 | 250,18 | 248,17 | 250,00 | 249,08 | 0,43% | 0,45% | 0,44% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,10% | 0,16% | 0,11% | 0,05% | 0,07% | 0,09% | | | |
| ບາດ | -0,17% | 0,10% | -0,05% | -0,33% | -0,09% | -0,32% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ເພີ່ມຂຶ້ນ 2,73% ທຽບໃສ່ວັນທີ 24/10/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 72,36%.
- ປະລິມານເງິນ $M_2$ ເພີ່ມຂຶ້ນ 0,92% ເມື່ອທຽບໃສ່ວັນທີ 24/10/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 24,01%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (ວັນທີ 21-27/10/2014) ເຫັນວ່າ ທທກ ຂາຍໂດລາສຸດທິ 17,63 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 37,89 ລ້ານໂດລາ ແລະ ຂາຍໂດລາໄດ້ 55,52 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 379,95 ລ້ານບາດ (ໃນນີ້ ຊື້ບາດໄດ້ 235,09 ລ້ານບາດ ແລະ ຂາຍບາດໄດ້ 615,04 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 11,10% ແລະ ຫຼຸດລົງ 31,58% ສຳລັບເງິນບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍ ເງິນໂດລາມີ ຈຳນວນ 7,67 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 92,98 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ໂດລາສຸດທິ ຈຳນວນ 36,14 ລ້ານໂດລາ ແຕ່ຂາຍບາດສຸດທິ ຈຳນວນ 232 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈຳນວນ 50,59 ລ້ານໂດລາ ແລະ ຊື້ບາດໄດ້ສຸດທິ ຈຳນວນ 0,04 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດຜ່ານມາ 14-20/10/2014 | | ອາທິດນີ້ 21-27/10/2014 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 17,78 | 199,43 | 17,01 | 140,30 | -4,30% | -29,65% |
| - ທ/ຄທຸລະກິດອື່ນໆ | 38,60 | 127,55 | 20,88 | 94,80 | -45,91% | -25,68% |
| ລວມຊື້: | 56,38 | 326,98 | 37,89 | 235,09 | -32,79% | -28,10% |
| 2. ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 21,81 | 267,25 | 17,35 | 229,93 | -20,44% | -13,96% |
| - ທ/ຄທຸລະກິດອື່ນໆ | 26,89 | 648,25 | 38,17 | 385,11 | 41,94% | -40,59% |
| ລວມຂາຍ: | 48,70 | 915,50 | 55,52 | 615,04 | 14,00% | -32,82% |
| ຊື້-ຂາຍສຸດທິ ທທກ | 7,67 | -588,52 | -17,63 | -379,95 | -329,77% | -35,44% |
| ຜິດດ່ຽງ ຊື້-ຂາຍ | 13,61 | -179,99 | -46,54 | -161,62 | -601,30% | 183,36% |
| ມູນຄ່າການຊື້-ຂາຍ | 105,08 | 1.242,48 | 93,41 | 850,14 | -11,10% | -31,58% |
| 3. ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 1,00 | 0,00 | 40,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 8,47 | 566,33 | 3,86 | 232,00 | | |
| ຊື້-ຂາຍສຸດທິ ທຫລ | -7,47 | -566,33 | 36,14 | -232,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 5,45 | 24,35 | 7,67 | 92,98 | | |
| 5. ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 93,21 | 0,00 | 50,69 | 0,04 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,03 | 92,49 | 0,10 | 0,00 | | |
| ຊື້-ຂາຍສຸດທິ ທຫລ | 93,18 | -92,49 | 50,59 | 0,04 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ ປະຈຳເດືອນ 10/2014 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 3,09% ເພີ່ມຂຶ້ນ 0,04% ຈາກ 3,05% ໃນເດືອນ 9/2014.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 54,59 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 28% ທຽບໃສ່ອາທິດຜ່ານມາ.

### 2.6 ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 845 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 2,31% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 1.086,77 ຕື້ກີບ ເພີ່ມຂຶ້ນ 103,91% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) (24-30/10/2014) ມີຈໍານວນ 1.016 ຄັ້ງ ໂດຍມີມູນຄ່າ 174,02 ຕື້ກີບ ຫຼຸດລົງ 22,6% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 332 ຄັ້ງ.

### 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.431,58 ຈຸດ ບໍ່ປ່ຽນແປງເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 142.194 ຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 1,05 ຕື້ກີບ ເພີ່ມຂຶ້ນ 5,85% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 58,83% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.737 ກີບ/ຮຸ້ນ ເພີ່ມຂຶ້ນ 36 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 80.180 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 620,41 ລ້ານກີບ ເພີ່ມຂຶ້ນ 308,32% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 66,40% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,43%[2].

ຮຸ້ນຂອງບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.044 ກີບ/ຮຸ້ນ ຫຼຸດລົງ 3 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 62.014 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 436,80 ລ້ານກີບ ຫຼຸດລົງ 48,42% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 34,45% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,24%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.200 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ຊຶ່ງໃນອາທິດນີ້ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,71%[4].

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສໍາເລັດການຮ່າງຂໍ້ຕົກລົງ ວ່າດ້ວຍການຂາຍຫຼັກຊັບທີ່ໄດ້ຮັບຈາກການຊໍາລະໜີ້ ຂອງທະນາຄານທຸລະກິດ (ຊໍາລະສະສາງຫຼັກຊັບຄໍ້າປະກັນ) ຂັ້ນພະແນກ;
- ສໍາເລັດການຕິດຕາມ,ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດ ຂອງບັນດາທະນາຄານທຸລະກິດ;
- ສໍາເລັດການເຮັດວຽກກັບຄະນະທີມງານ IMF ທີ່ມາປະເມີນຜົນເສດຖະກິດມະຫາພາກ ຂອງ ສປປ ລາວ ໃນສົກປີ 2014;
- ສໍາເລັດຈັດກອງປະຊຸມ: ❶ ກອງປະຊຸມຮ່ວມກັບ IMF ຮ່ວມກັບ ທຫລ ໃນວຽກງານມຸມມອງໃນການພັດທະນາເສດຖະກິດມະຫາພາກ, ❷ ກອງປະຊຸມທົບທວນຄືນເນື້ອໃນ, ຂໍ້ມູນ, ຕົວເລກ ແລະ ລາຍລະອຽດຕ່າງໆຂອງບົດປະເມີນຜົນເສດຖະກິດມະຫາພາກຂອງ ສປປ ລາວ ປະຈໍາປີ 2014 ຮ່ວມກັບກະຊວງກ່ຽວຂ້ອງ ແລະ IMF ທີ່ ທສກ, ❸ ກອງປະຊຸມຄະນະພັດທະນາໂປຼແກຼມບັນຊີ ສໍາລັບສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ ຄັ້ງທີ I;
- ສໍາເລັດການຈັດສໍາມະນາກ່ຽວກັບແບບຈໍາລອງເງິນເຟີ້ ຢູ່ ສປປ ລາວ ຮ່ວມກັບຄະນະຊ່ຽວຊານ IMF ທີ່ໂຮງແຮມກຼີນປາກ;

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດຂອງ ແມ່ນບໍ່ມີການົດ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າການສະເໜີຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ກ່ຽວກັບການເຄື່ອນໄຫວບັນຊີຂອງນິຕິບຸກຄົນ ທີ່ມີການເຄື່ອນໄຫວລັກສະນະນາຍໜ້າຊື້-ຂາຍຜະລິດຕະພັນການເງິນ, ❷ ຄົ້ນຄວ້າເນື້ອໃນຂອງຫຼັກການບາແຊວ 2 ໃນແຕ່ລະ Pillar ໂດຍລົງເລິກບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການບາແຊວ 2 ເພື່ອເປັນໝາກຜົນໃນການລາຍງານກອງປະຊຸມຄົບຄະນະບາແຊວ 2 ຄັ້ງທີ IV, ❸ ຄົ້ນຄວ້າຮ່າງບົດບັນທຶກຊ່ວຍຈຳລະຫວ່າງໜ່ວຍງານ AMLIU ກັບກົມພາສີກະຊວງການເງິນ, ກົມຕຳຫຼວດເສດຖະກິດ, ກະຊວງປ້ອງກັນຄວາມສະຫງົບ ແລະ ໜ່ວຍງານຕ້ານການຟອກເງິນ ປະເທດກຳປູເຈຍ, ❹ ຄົ້ນຄວ້າ ແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້ານິຕິກຳລຸ່ມກົດໝາຍ ເພື່ອນຳສະເໜີຂັ້ນເທິງ, ❺ ຄົ້ນຄວ້າ ກ່ຽວກັບການສ້າງລະບົບຕ້ານການຟອກເງິນທີ່ທັນສະໄໝ ໂດຍສະເພາະແມ່ນລະບົບ IT;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ລຸ້ນປີ 2011 ຈານວນ 60 ລ້ານໃບ;
- ສືບຕໍ່ຄົ້ນຄວ້າຕໍ່ຄຳຮ້ອງຟ້ອງຂອງລູກຄ້າສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກເອກພັດທະນາ ຕໍ່ກັບການຄິດໄລ່ອັດຕາດອກເບ້ຍເງິນກູ້ຂອງສະຖາບັນ;
- ສືບຕໍ່ຄົ້ນຄວ້າການສະເໜີຂອງໂຄງການ AFP ຕໍ່ການສະເໜີພິຈາລະນາເອົາຕົວແທນຈາກທະນາຄານທຸລະກິດລັດເຂົ້າຮ່ວມໃນສະພາບໍລິຫານ NSOs;
- ສືບຕໍ່ປະຕິບັດວຽກງານຂາຍສິດນຳໃຊ້ທີ່ດິນ 2 ຟາກທາງຖະໜົນວຽງຈັນ 450 ປີ.

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ທະນາຄານແຫ່ງ ສປປ ລາວ

ພາສີ ພິມມະກອນ